PetroTrade

# ບໍລິສັດປິໂຕຣລ້ຽມເທຣດດິ້ງລາວມະຫາຊົນແລະ ບໍລິສັດຍ່ອຍ

## ເອກະສານລາຍງານການເງິນສັງລວມ (ທົບທວນຄືນ)

## ສຳລັບໄລຍະ 9 ເດືອນຕົ້ນປີສິ້ນສຸດ ນະວັນທີ 30 ກັນຍາ 2018

# ລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ
# ແລະ ບໍລິສັດ ຍ່ອຍ

**ເອກະສານລາຍງານການເງິນສັງລວມກິດຈະການ (ທົບທວນຄືນ)**

**ສຳລັບໄລຍະ 9 ເດືອນຕົ້ນປີສິ້ນສຸດ ວັນທີ 30 ກັນຍາ 2018**

**ສາລະບານ** **ໜ້າ**


| | |
|---|---|
| ໃບລາຍງານຖານະການເງິນສັງລວມກິດຈະການ | 2-3 |
| ໃບລາຍງານຜົນໄດ້ຮັບສັງລວມກິດຈະການ | 4–5 |
| ໃບລາຍງານສ່ວນປ່ຽນແປງທຶນສັງລວມກິດຈະການ | 6 |
| ໃບລາຍງານກະແສເງິນສົດສັງລວມກິດຈະການ | 7-8 |
| ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນສັງລວມກິດຈະການ | 9-18 |

| | ປີດອະທິ ບາຍ | ທີ່ບທວນຄືນ 30 ກັນຍາ 2018 ກີບ | ກວດສອບ 31 ທັນວາ 2017 ກີບ |
|---|---|---|---|
| **ຊັບສິນ** | | | |
| **ຊັບສິນໝຸນວຽນ** | | | |
| ເງິນສົດ ແລະ ລາຍການທຽບເທົ່າເງິນສົດ | 4 | 12,448,664,345 | 8,281,373,673 |
| ໜີ້ຕ້ອງຮັບທາງການຄ້າ-ສຸດທິ | 5 | 84,480,711,382 | 104,404,189,804 |
| ສິນຄ້າໃນສາງ-ສຸດທິ | 6 | 14,273,827,121 | 10,096,414,860 |
| ເງິນໃຫ້ພາກສ່ວນທີ່ກ່ຽວຂ້ອງ ກູ້ຢືມໄລຍະສັ້ນ | 19 v) | 20,100,253,931 | 16,337,608,447 |
| ຊັບສິນໝຸນວຽນອື່ນໆ | 7 | 56,608,994,132 | 57,805,442,022 |
| **ລວມຊັບສິນໝຸນວຽນທັງໝົດ** | | 187,912,450,911 | 196,925,028,806 |
| **ຊັບສິນບໍ່ໝຸນວຽນ** | | | |
| ຊັບສິມບັດຖິ່ງທີ່ມີຕົວຕົນ-ສຸດທິ | 8 | 438,156,118,895 | 269,317,540,947 |
| ຊັບສິມບັດຖິ່ງທີ່ບໍ່ມີຕົວຕົນ-ສຸດທິ | 9 | 7,001,524,357 | 7,804,109,546 |
| ຊັບສິມບັດຖິ່ງທີ່ເພື່ອການລົງທຶນ-ສຸດທິ | 10 | - | 180,903,625,951 |
| ເງິນໃຫ້ພາກສ່ວນທີ່ກ່ຽວຂ້ອງ ກູ້ຢືມໄລຍະຍາວ | 19 v) | 20,955,769,340 | 24,471,734,824 |
| ຊັບສິນບໍ່ໝຸນວຽນອື່ນໆ | 11 | 49,473,736,029 | 43,945,103,950 |
| **ລວມຊັບສິນບໍ່ໝຸນວຽນທັງໝົດ** | | 515,587,148,621 | 526,442,115,218 |
| **ລວມຊັບສິນທັງໝົດ** | | **703,499,599,532** | **723,367,144,024** |

ທ່ານ ຈັນທອນ ສິດທິໄຊ
ຜູ້ອຳນວຍການໃຫຍ່

ວັນທີ 8 ພະຈິກ 2018

ທ່ານ ນາງ ຈັນທະດອນ ເມກສະຫວັນ
ຮັກສາການຫົວໜ້າຝ່າຍບັນຊີ - ການເງິນ

ວັນທີ 8 ພະຈິກ 2018

ປິດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນສັງລວມກິດຈະການ ແຕ່ໜ້າ 9 ເຖິງ 18 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ.

| | ບິດອະທິ ບາຍ | ທີ່ບທວນຄືນ 30 ກັນຍາ 2018 ກີບ | ກວດສອບ 31 ທັນວາ 2017 ກີບ |
|---|---|---|---|
| **ໜີ້ສິນ ແລະ ທຶນ** | | | |
| **ໜີ້ສິນ** | | | |
| **ໜີ້ສິນໝຸນວຽນ** | | | |
| ໜີ້ຕ້ອງສົ່ງທາງການຄ້າ | 12 | 42,583,876,073 | 30,593,750,899 |
| ໜີ້ຕ້ອງສົ່ງອາກອນ | 13 | 2,379,987,758 | 3,050,165,848 |
| ເງິນກູ້ຢືມໄລຍະສັ້ນ | 14 | 288,512,846,316 | 274,031,960,000 |
| ໜີ້ສິນໝຸນວຽນອື່ນໆ | 15 | 28,646,647,058 | 7,465,924,644 |
| **ລວມໜີ້ສິນໝຸນວຽນທັງໝົດ** | | 362,123,357,205 | 315,141,801,391 |
| **ໜີ້ສິນບໍ່ໝຸນວຽນ** | | | |
| ເງິນກູ້ຢືມໄລຍະຍາວ | 14 | 17,879,473,684 | 32,600,000,000 |
| **ລວມໜີ້ສິນບໍ່ໝຸນວຽນທັງໝົດ** | | 17,879,473,684 | 32,600,000,000 |
| **ລວມໜີ້ສິນທັງໝົດ** | | 380,002,830,889 | 347,741,801,391 |
| **ທຶນ** | | | |
| ທຶນຈົດທະບຽນທີ່ຖອກແລ້ວ | 16 | 470,000,000,000 | 470,000,000,000 |
| ສ່ວນເພີ່ມມູນຄ່າຮຸ້ນ | | 27,638,932,340 | 27,638,932,340 |
| ສຳຮອງການຄອບຄຸມຮ່ວມ | | (898,908,935) | (898,908,935) |
| ສ່ວນຕ່າງຈາກການແປງຄ່າ | | 192,318,129 | 114,046,477 |
| ກຳໄລສະສົມ | | | |
| ຈັດສັນ - ສຳຮອງຕາມລະບຽບການ | | 3,708,530,711 | 3,708,530,711 |
| ສຳຮອງອື່ນໆ | | 1,977,267,979 | 1,977,267,979 |
| ກຳໄລ(ຂາດທຶນ) ສະສົມຍ້ຳແບ່ງປັນ | | (181,126,645,985) | (126,914,435,917) |
| **ທຶນ ຄວາມເປັນເຈົ້າຂອງ ຂອງບໍລິສັດແມ່** | | **321,491,494,239** | **375,625,432,655** |
| ເງິນລົງທຶນທີ່ບໍ່ໃຫ້ສິດຄອບຄຸມ | | 2,005,274,404 | (90,022) |
| **ລວມທຶນທັງໝົດ** | | **323,496,768,643** | **375,625,342,633** |
| **ລວມໜີ້ສິນ ແລະ ທຶນ ທັງໝົດ** | | **703,499,599,532** | **723,367,144,024** |

ທ່ານ ຈັນທອນ ສິດທິໄຊ
ຜູ້ອຳນວຍການໃຫຍ່
ວັນທີ 8 ພະຈິກ 2018

ທ່ານ ນາງ ຈັນທະດອນ ເມກສະຫວັນ
ຮັກສາການຫົວໜ້າຝ່າຍບັນຊີ - ການເງິນ
ວັນທີ 8 ພະຈິກ 2018

ບິດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນສັງລວມກິດຈະການ ແຕ່ໜ້າ 9 ເຖິງ 18 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ.

| | ບິດອະທິ ບາຍ | ທີ່ບທວນຄືນ 30 ກັນຍາ 2018 ກີບ | ທີ່ບທວນຄືນ 30 ກັນຍາ 2017 ກີບ |
|---|---|---|---|
| ລາຍຮັບ | | 834,933,882,782 | 639,776,132,336 |
| ຕົ້ນທຶນຂາຍ | | (804,648,940,484) | (596,500,759,652) |
| **ກຳໄລເບ້ືອງຕົ້ນ** | | 30,284,942,298 | 43,275,372,684 |
| ລາຍຮັບອື່ນໆ | | 21,453,316,758 | 9,503,062,326 |
| ລາຍຈ່າຍໃນການຂາຍ | | (15,218,230,714) | (16,359,110,463) |
| ລາຍຈ່າຍບໍລິຫານ | | (45,211,151,688) | (54,931,625,685) |
| **ຂາດທຶນ ຈາກການດຳເນີນງານ** | | (8,691,123,346) | (18,512,301,138) |
| ລາຍຈ່າຍທາງການເງິນ | | (45,606,356,910) | (39,833,090,079) |
| **ຂາດທຶນສຸດທິ ກ່ອນຫັກອາກອນ** | | (54,297,480,256) | (58,345,391,217) |
| ອາກອນກຳໄລ | 17 | - | - |
| **ຂາດທຶນສຸດທິ ສຳລັບໄລຍະ** | | **(54,297,480,256)** | **(58,345,391,217)** |
| **ຂາດທຶນ ທີ່ເປັນສ່ວນຂອງ** | | | |
| ບໍລິສັດ ແມ່ | | (54,212,210,068) | (58,339,556,678) |
| ຮຸ້ນທີ່ຖືໂດຍບຸກຄົນອື່ນ | | (85,270,188) | (5,834,539) |
| | | **(54,297,480,256)** | **(58,345,391,217)** |
| **ກຳໄລຕໍ່ຮຸ້ນ** | | | |
| ກຳໄລ (ຂາດທຶນ) ພື້ນຖານຕໍ່ຮຸ້ນ | 18 | (231) | (248) |

ທ່ານ ຈັນທອນ ສິດທິໄຊ
ຜູ້ອຳນວຍການໃຫຍ່

ວັນທີ 8 ພະຈິກ 2018

ທ່ານ ນາງ ຈັນທະດອນ ເມກສະຫວັນ
ຮັກສາການຫົວໜ້າຝ່າຍບັນຊີ - ການເງິນ

ວັນທີ 8 ພະຈິກ 2018

ບິດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນສັງລວມກິດຈະການ ແຕ່ໜ້າ 9 ເຖິງ 18 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ.

| | ບິດອະທິ ບາຍ | ທີ່ບທວນຄືນ 30 ກັນຍາ 2018 ກີບ | ທີ່ບທວນຄືນ 30 ກັນຍາ 2017 ກີບ |
|---|---|---|---|
| ລາຍຮັບ | | 246,756,527,477 | 190,023,132,336 |
| ຕົ້ນທຶນຂາຍ | | (237,832,733,158) | (174,975,759,652) |
| **ກຳໄລເບື້ອງຕົ້ນ** | | 8,923,794,319 | 15,047,372,684 |
| ລາຍຮັບອື່ນໆ | | 9,725,680,407 | 2,810,062,326 |
| ລາຍຈ່າຍໃນການຂາຍ | | (4,082,486,887) | (5,501,110,463) |
| ລາຍຈ່າຍບໍລິຫານ | | (16,220,321,004) | (16,756,625,685) |
| **ຂາດທຶນ ຈາກການດຳເນີນງານ** | | (1,653,333,165) | (4,400,301,138) |
| ລາຍຈ່າຍທາງການເງິນ | | (20,824,073,835) | (11,926,090,079) |
| **ຂາດທຶນສຸດທິ ກ່ອນຫັກອາກອນ** | | (22,477,407,000) | (16,326,391,217) |
| ອາກອນກຳໄລ | 17 | - | - |
| **ຂາດທຶນສຸດທິ ສຳລັບໄລຍະ** | | **(22,477,407,000)** | **(16,326,391,217)** |
| **ຂາດທຶນ ທີ່ເປັນສ່ວນຂອງ** | | | |
| ບໍລິສັດ ແມ່ | | (22,324,529,631) | (16,326,391,217) |
| ຮຸ້ນທີ່ຖືໂດຍບຸກຄົນອື່ນ | | (152,877,369) | - |
| | | **(22,477,407,000)** | **(16,326,391,217)** |
| **ກຳໄລຕໍ່ຮຸ້ນ** | | | |
| ກຳໄລ (ຂາດທຶນ) ພື້ນຖານຕໍ່ຮຸ້ນ | 18 | (95) | (69) |

ທ່ານ ຈັນທອນ ສິດທິໄຊ
ຜູ້ອຳນວຍການໃຫຍ່

ວັນທີ 8 ພະຈິກ 2018

ທ່ານ ນາງ ຈັນທະດອນ ເມກສະຫວັນ
ຮັກສາການຫົວໜ້າຝ່າຍບັນຊີ - ການເງິນ

ວັນທີ 8 ພະຈິກ 2018

ບິດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນສັ້ງລວມກິດຈະການ ແຕ່ໜ້າ 9 ເຖິງ 18 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ.

**ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ແລະ ບໍລິສັດ ຍ່ອຍ**
**ໃບລາຍງານສ່ວນປ່ຽນແປງທຶນສັງລວມກິດຈະການ**
**ສຳລັບໄລຍະ 9 ເດືອນ ສິ້ນສຸດໃນວັນທີ 30 ກັນຍາ 2018**

| | ທຶນຈົດທະບຽນ ທີ່ຖອກແລ້ວ (ປິດອະທິບາຍຂໍ້ 16) ກີບ | ສ່ວນເພີ່ມ ມູນຄ່າຮຸ້ນ ກີບ | ສຳຮອງການຄວບ ຄຸມຮ່ວມ ກີບ | ສຳຮອງຕາມ ລະບຽບການ ກີບ | ສ່ວນຕ່າງຈາກ ການແປງຄ່າ ກີບ | ສຳຮອງອື່ນໆ ກີບ | ກຳໄລ (ຂາດທຶນ) ສະສົມຈ່ຳແນ່ງປັນ ກີບ | ເງິນລົງທຶນທີ່ບໍ່ໃຫ້ ສິດຄວບຄຸມ ກີບ | ລວມ ກີບ |
|---|---|---|---|---|---|---|---|---|---|
| **ຍອດຍົກມາໃນວັນທີ 1 ມັງກອນ 2018- ກວດສອບ** | **470,000,000,000** | **27,638,932,340** | **(898,908,935)** | **3,708,530,711** | **114,046,477** | **1,977,267,979** | **(126,914,435,917)** | **(90,022)** | **375,625,342,633** |
| ສ່ວນຕ່າງຈາກການແປງຄ່າເງິນຕາຕ່າງປະເທດ | - | - | - | - | 78,271,652 | - | - | - | 78,271,652 |
| ສ່ວນປ່ຽນແປງສິດເປັນເຈົ້າຂອງ ຂອງບໍລິສັດແມ່ ໃນບໍລິສັດຍ່ອຍ | - | - | - | - | - | - | - | 2,090,634,614 | 2,090,634,614 |
| ຂາດທຶນສຸດທິສຳລັບໄລຍະ | - | - | - | - | - | - | (54,212,210,068) | (85,270,188) | (54,297,480,256) |
| **ຍອດເຫຼືອໃນວັນທີ 30 ກັນຍາ 2018-ທຶບທວນລົນ** | **470,000,000,000** | **27,638,932,340** | **(898,908,935)** | **3,708,530,711** | **192,318,129** | **1,977,267,979** | **(181,126,645,985)** | **2,005,274,404** | **323,496,768,643** |
| **ຍອດຍົກມາໃນວັນທີ 1 ມັງກອນ 2017- ກວດສອບ** | **470,000,000,000** | **27,638,932,340** | **(898,908,935)** | **3,708,530,711** | **32,603,350** | **1,977,267,979** | **(47,576,373,943)** | **(90,022)** | **454,882,051,502** |
| ສ່ວນຕ່າງຈາກການແປງຄ່າເງິນຕາຕ່າງປະເທດ | - | - | - | - | 12,399,210 | - | | - | 12,399,210 |
| ຂາດທຶນສຸດທິສຳລັບໄລຍະ | - | - | - | - | - | - | (58,339,646,700) | (5,744,517) | (58,345,391,217) |
| **ຍອດເຫຼືອໃນວັນທີ 30 ກັນຍາ 2017-ທຶບທວນລົນ** | **470,000,000,000** | **27,638,932,340** | **(898,908,935)** | **3,708,530,711** | **45,002,560** | **1,977,267,979** | **(105,916,020,643)** | **(5,834,539)** | **396,549,059,495** |

ທ່ານ ຈັນທອນ ສິດທິໄຊ
ຜູ້ອຳນວຍການໃຫຍ່

ວັນທີ 8 ພະຈິກ 2018

ທ່ານ ນາງ ຈັນທະດອນ ເມກສະຫວັນ
ຮັກສາການຫົວໜ້າຝ່າຍບັນຊີ - ການເງິນ

ວັນທີ 8 ພະຈິກ 2018

ປິດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນສັງລວມກິດຈະການ ແຕ່ໜ້າ 9 ເຖິງ 18 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ.

| | ບິດອະທິ ບາຍ | ທີ່ບທວນຄືນ 30 ກັນຍາ 2018 ກີບ | ທີ່ບທວນຄືນ 30 ກັນຍາ 2017 ກີບ |
|---|---|---|---|
| **ກະແສເງິນສົດຈາກກິດຈະກຳການດຳເນີນງານ:** | | | |
| ກຳໄລ (ຂາດທຶນ) ກ່ອນຫັກອາກອນສຳລັບໄລຍະ | | (54,297,480,256) | (58,345,391,217) |
| ປັບປຸງເພື່ອສົມທຽບກຳໄລສຸດທິກັບເງິນສົດສຸດທິ | | | |
| ຄ່າຫຼ້ຍຫ້ຽນ ແລະ ຄ່າເຊື່ອມມູນຄ່າ | 8, 9,10 | 18,487,296,073 | 17,423,049,300 |
| ກັບລາຍການບັນຊີສຳຮອງສິນຄ້າໃນສາງ | | (156,790,254) | 897,000,000 |
| ສຳຮອງໜີ້ສົງໃສຈະເສຍ | | 765,827,870 | 718,066,075 |
| ດອກເບ້ຍຈ່າຍ | | (1,987,598,650) | - |
| (ກຳໄລ) ຂາດທຶນ ຈາກອັດຕາແລກປ່ຽນທີ່ຍັງບໍ່ໄດ້ເກີດຂຶ້ນຈິງ | | 19,602,575,299 | - |
| ອາກອນອື່ນໆ ແລະ ອາກອນຈ່າຍຕາມລະບຽບການ | | 9,782,512,476 | - |
| ກຳໄລ (ຂາດທຶນ) ຈາກການດຳເນີນງານກ່ອນການປ່ຽນແປງທຶນໝຸນວຽນ | | (7,803,657,442) | (39,307,275,842) |
| ການປ່ຽນແປງຊັບສິນ ແລະ ໜີ້ສິນໃນການດຳເນີນງານ | | | |
| ໜີ້ຕ້ອງຮັບທາງການຄ້າ | | 19,157,650,552 | 29,034,696,533 |
| ສິນຄ້າໃນສາງ | | (4,020,622,007) | 59,982,030,821 |
| ຊັບສິນອື່ນໆ | | (253,950,925) | (2,205,972,028) |
| ໜີ້ຕ້ອງສົ່ງທາງການຄ້າ | | 8,659,150,448 | (103,948,135,266) |
| ອາກອນຄ້າງຈ່າຍ | | 11,073,013,474 | (1,509,495,365) |
| ໜີ້ຕ້ອງສົ່ງອື່ນໆ | | 21,542,634,235 | 2,215,847,255 |
| ເງິນສົດໄດ້ມາຈາກ (ໃຊ້ໃນ) ກິດຈະກຳດຳເນີນງານ | | 48,354,218,335 | (55,738,303,892) |
| ດອກເບ້ຍຮັບຈາກເງິນໃຫ້ກູ້ຢືມແກ່ພາກສ່ວນທີ່ກ່ຽວຂ້ອງ | | (19,964,487,120) | - |
| ອາກອນຈ່າຍ | | (11,743,191,564) | (192,064,216) |
| ເງິນສົດສຸດທິເກີດຈາກໃຊ້ໃນກິດຈະກຳການດຳເນີນງານ | | 16,646,539,651 | (55,930,368,108) |
| **ກະແສເງິນສົດຈາກກິດຈະກຳການລົງທຶນ:** | | | |
| ການໄດ້ມາຂອງຊັບສິນຄົງທີ່ | 8 | (2,490,861,147) | (26,029,836,610) |
| ເງິນໃຫ້ກູ້ຢືມແກ່ພາກສ່ວນທີ່ກ່ຽວຂ້ອງ | 19 | - | (2,628,051,084) |
| ເງິນສົດສຸດທິ ຈາກ (ໃຊ້ໃນ) ກິດຈະກຳການລົງທຶນ | | (2,490,861,147) | (28,657,887,694) |

ທ່ານ ຈັນທອນ ສິດທິໄຊ
ຜູ້ອຳນວຍການໃຫຍ່

ວັນທີ 8 ພະຈິກ 2018

ທ່ານ ນາງ ຈັນທະດອນ ເມກສະຫວັນ
ຮັກສາການຫົວໜ້າຝ່າຍບັນຊີ - ການເງິນ

ວັນທີ 8 ພະຈິກ 2018

ບິດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນສັງລວມກິດຈະການ ແຕ່ໜ້າ 9 ເຖິງ 18 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ.

| | ທີ່ບທວນຄືນ 30 ກັນຍາ 2018 ກີບ | ທີ່ບທວນຄືນ 30 ກັນຍາ 2017 ກີບ |
|---|---|---|
| **ກະແສເງິນສົດຈາກກິດຈະກຳການເງິນ:** | | |
| ເງິນສົດຮັບຈາກການກູ້ຢືມ | - | 36,777,983,721 |
| ຊຳລະຄືນເງິນກູ້ຢືມ | (10,150,000,000) | (26,807,087,875) |
| **ເງິນສົດສຸດທິ ຈາກ (ໃຊ້ໃນ) ກິດຈະກຳການເງິນ** | (10,150,000,000) | 9,970,895,846 |
| **ເພີ່ມຂຶ້ນ/(ຫຼຸດລົງ) ສຸດທິໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ** | 4,005,678,504 | (74,617,359,956) |
| ເງິນສົດ ແລະ ລາຍການທຽບເທົ່າເງິນສົດຕົ້ນປີ | 8,281,373,673 | 77,887,019,913 |
| ກຳໄລ (ຂາດທຶນ) ຈາກອັດຕາແລກປ່ຽນໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ | 161,612,168 | 195,420,000 |
| ເງິນສົດ ແລະ ລາຍການທຽບເທົ່າເງິນສົດສຳລັບທ້າຍໄລຍະ | 12,448,664,345 | 3,465,079,957 |
| **ລາຍການສຳຄັນທີ່ບໍ່ແມ່ນເງິນສົດ** | | |
| ບັນຊີໜີ້ຕ້ອງສົ່ງ ສຳລັບຊັບສິນຄົງທີ່ | 3,128,801,734 | 2,238,662,986 |

ທ່ານ ຈັນທອນ ສິດທິໄຊ
ຜູ້ອຳນວຍການໃຫຍ່

ວັນທີ 8 ພະຈິກ 2018

ທ່ານ ນາງ ຈັນທະດອນ ເມກສະຫວັນ
ຮັກສາການຫົວໜ້າຝ່າຍບັນຊີ - ການເງິນ

ວັນທີ 8 ພະຈິກ 2018

ບົດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນສັງລວມກິດຈະການ ແຕ່ໜ້າ 9 ເຖິງ 18 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ.

## 1. ຂໍ້ມູນທົ່ວໄປ

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (ຕໍ່ໄປນີ້ເອີ້ນວ່າ ບໍລິສັດ) ແລະ ບໍລິສັດຍ່ອຍ ເຊິ່ງແມ່ນບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ (ລວມກັນເປັນກຸ່ມບໍລິສັດ) ແມ່ນເປັນບໍລິສັດຈົດທະບຽນ ໃນຕະຫຼາດຫຼັກຊັບລາວ ແລະ ສ້າງຕັ້ງຂຶ້ນໃນ ສປປ ລາວ, ແມ່ນບໍລິສັດທີ່ດຳເນີນທຸລະກິດ ແລະ ຈົດທະບຽນກັບ ກະຊວງອຸດສາຫະກຳ ແລະ ການຄ້າ, ລົງວັນທີ 3 ຕຸລາ 2008.

ສຳນັກງານໃຫຍ່ຂອງບໍລິສັດຕັ້ງຢູ່ ຖະໜົນກຳແພງເມືອງ, ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ, ໃນປະຈຸບັນ ບໍລິສັດມີສາງເກັບນ້ຳມັນ 5 ແຫ່ງ ເຊິ່ງຕັ້ງຢູ່ ນະຄອນຫຼວງວຽງຈັນ, ແຂວງ ບໍລິຄຳໄຊ, ແຂວງ ສະຫວັນນະເຂດ, ແຂວງ ໄຊຍະບຸລີ ແລະ ແຂວງ ຈຳປາສັກ, ສປປ ລາວ.

ບໍລິສັດ ຖືຮຸ້ນ ຢູ່ 99.99 % ຂອງຜົນປະໂຫຍດໃນ ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ຈຳກັດ ເຊິ່ງສ້າງຕັ້ງໃນປະເທດໄທໃນເດືອນ ມິຖຸນາ 2016.

ກິດຈະກຳຫຼັກຂອງບໍລິສັດ ຄືການຈຳໜ່າຍຜະລິດຕະພັນ ນ້ຳມັນເຊື້ອໄຟ, ຜະລິດຕະພັນ ປິໂຕຣລ້ຽມ ແລະ ບໍລິການສາງເກັບສິນຄ້າ.

ອີງຕາມດຳລັດ ວ່າດ້ວຍ ທຸລະກິດນ້ຳມັນເຊື້ອໄຟ ສະບັບເລກທີ 331/ນຍ, ລົງວັນທີ 27 ຕຸລາ 2017, ອອກໃຫ້ໂດຍກະຊວງອຸດສາຫະກຳ ແລະ ການຄ້າ, ບໍລິສັດ ປິໂຕຣລ້ຽມ ທີ່ມີການຈົດທະບຽນທຸລະກິດໜຶ່ງ ແມ່ນບໍ່ໄດ້ຮັບອະນຸຍາດໃຫ້ດຳເນີນກິດຈະການທັງນຳເຂົ້ານ້ຳມັນ ແລະ ຂາຍສົ່ງ/ຂາຍຍ່ອຍ ໃນປະເທດໃນເວລາດຽວກັນ.

ໃນໄຕມາດ 2 ແລະ ໄຕມາດ 3 ປີ 2018. ອີງຕາມບົດບັນທຶກ ກອງປະຊຸມວິສາມັນຜູ້ຖືຮຸ້ນ ເລກທີ 113/ປທລ/2018 ລົງວັນທີ 13 ມິຖຸນາ 2018 ແລະ ບົດບັນທຶກ ກອງປະຊຸມວິສາມັນຜູ້ຖືຮຸ້ນ ເລກທີ 170/ປທລ/2018 ລົງວັນທີ 14 ກໍລະກົດ 2018, ບໍລິສັດ ໄດ້ແບ່ງທຸລະກິດ ອອກເປັນ ສອງ ທຸລະກິດ ເພື່ອສ້າງຕັ້ງບໍລິສັດຍ່ອຍ ສອງ ບໍລິສັດໃນ ສປປ ລາວ ດັ່ງລຸ່ມນີ້:

| ຊື່ບໍລິສັດ | ປະເພດທຸລະກິດ | ປະເທດສ້າງຕັ້ງ | % ການຖືຮຸ້ນ ຫຼື ທຶນ |
|---|---|---|---|
| ບໍລິສັດ ປິໂຕເທຣດ (ລາວ) ຈຳກັດ | ນຳເຂົ້າ ແລະ ສົ່ງອອກນ້ຳມັນ | ປະເທດລາວ | 99.99% |
| ບໍລິສັດ ປິໂຕເທຣດ ຣິເທວ (ລາວ) ຈຳກັດ | ຈຳໜ່າຍນ້ຳມັນໃນປະເທດລາວ | ປະເທດລາວ | 99.99% |

ນະວັນທີບົດລາຍງານການເງິນ, ທັງສອງບໍລິສັດໄດ້ສຳເລັດຂະບວນການຈົດທະບຽນກັບ ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ໄດ້ເລີ່ມ ດຳເນີນທຸລະກິດແລ້ວ. ບໍລິສັດແມ່ນໄດ້ຢູ່ໃນຂະບວນການດຳເນີນການ ເພື່ອໃຫ້ສຳເລັດສົມບູນໃນຂະບວນການເຈລະຈາຍຸດທະສາດຮ່ວມ ທຸລະກິດກັບນັກລົງທຶນຕ່າງປະເທດ ແລະ ຄາດວ່າຈະສຳເລັດຂະບວນການທັງໝົດພາຍໃນປີ 2018.

ເອກະສານລາຍງານການເງິນສັງລວມກິດຈະການ ຂອງເກົ້າເດືອນຕົ້ນປີ ສະບັບນີ້ໄດ້ຜ່ານການອະນຸມັດ ໂດຍຄະນະຜູ້ອຳນວຍການ ໃນວັນທີ 8 ພະຈິກ 2018.

## 2. ພື້ນຖານໃນການກະກຽມບົດລາຍງານ ແລະ ນະໂຍບາຍການບັນຊີ

ເອກະສານລາຍງານການເງິນສັງລວມກິດຈະການ ຂອງເກົ້າເດືອນຕົ້ນປີ ໄດ້ຖືກສ້າງຂຶ້ນສອດຄ່ອງກັບນະໂຍບາຍການບັນຊີຂອງ ກຸ່ມບໍລິສັດທີ່ ໄດ້ອະທິບາຍລາຍລະອຽດຕ່າງໆຢູ່ໃນ ເອກະສານລາຍງານການເງິນສັງລວມກິດຈະການ ປະຈຳປີ ສຳລັບປີສິ້ນສຸດວັນທີ 31 ທັນວາ 2017. ເອກະສານລາຍງານການເງິນເບື້ອງຕົ້ນນີ້ (ເປັນຕົ້ນ: ໃບລາຍງານຖານະການເງິນສັງລວມກິດຈະການ, ໃບລາຍງານຜົນໄດ້ຮັບສັງລວມກິດຈະການ , ໃບລາຍງານສ່ວນປ່ຽນແປງທຶນສັງລວມກິດຈະການ ແລະ ໃບລາຍງານກະແສເງິນສົດສັງລວມກິດຈະການ) ແມ່ນເປັນໄປຕາມກົດລະບຽບ ການເປີດເຜີຍທີ່ ອອກໂດຍ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ອີງຕາມກົດໝາຍວ່າດ້ວຍການບັນຊີ ແລະ ຂໍ້ກຳນົດກ່ຽວກັບການບັນຊີ ແລະ ການກວດສອບບັນຊີ ໃນສ່ວນຂອງບໍລິສັດຈົດທະບຽນ ພາຍໃຕ້ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (LSCO) ໃນ ສປປ ລາວ, ບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບ ຕ້ອງສ້າງເອກະສານລາຍ ງານການເງິນຕາມມາດຕະຖານລາຍງານທາງການເງິນສາກົນ (IFRS) ຊຶ່ງເປັນຫຼັກການບັນຊີທີ່ຮັບຮອງທົ່ວໄປ, ປັດຈຸບັນ LSCO ຍັງຜ່ອນຜັນ ແລະ ອະນຸຍາດໃຫ້ບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບປະຕິບັດຕາມນະໂຍບາຍການບັນຊີທີ່ສຳຄັນຂອງບໍລິສັດ ແຕ່ສະໜັບສະໜຸນໃຫ້ ບໍລິສັດໃນຕະຫຼາດຫຼັກຊັບໄດ້ນຳໃຊ້ IFRS ໄປໃຊ້ໃນອະນາຄົດອັນໃກ້ນີ້. ໃນສປປ ລາວ, ຂໍ້ແຕກຕ່າງທີ່ມີສາລະສຳຄັນລະຫວ່າງບັນຊີຂອງ ບໍລິສັດ ກັບ IFRS ໃນຫຼາຍໆດ້ານ ເຊັ່ນ: ຊັບສິນບັດຄົງທີ່ມີຕົວຕົນ, ສັນຍາເຊົ່າ, ຜົນປະໂຫຍດພະນັກງານ, ເງິນກູ້ຢືມ, ອາກອນລາຍໄດ້ ແລະ ອາກອນເຍື້ອນຊຳລະ, ເຄື່ອງມືທາງການເງິນ, ເອກະສານການເງິນສັງລວມກິດຈະການ ໂດຍຫຍໍ້ ແລະ ແຍກສະເພາະ, ການລວມທຸລະກິດ ແລະ ຄ່າໃຊ້ຈ່າຍກ່ອນການດຳເນີນງານ. ສະນັ້ນຜູ້ໃຊ້ເອກະສານລາຍງານການເງິນຄວນເຂົ້າໃຈ ຄວາມແຕກຕ່າງທີ່ອາດມີຜົນກະທົບຕໍ່ການຕັດສິນໃຈ ໃນການນຳໃຊ້ຂໍ້ມູນໃນເອກະສານລາຍງານການເງິນ ແລະ ນຳໃຊ້ຢ່າງລະມັດລະວັງ.

ເອກະສານລາຍງານການເງິນ ເກົ້າເດືອນຕົ້ນປີ ຕ້ອງໄດ້ອ່ານຄວບຄູ່ກັບ ເອກະສານລາຍງານການເງິນປະຈຳປີ ສຳລັບປີສິ້ນສຸດວັນທີ 31 ທັນວາ 2017.

ລາຍຈ່າຍທີ່ເກີດຂຶ້ນບໍ່ສະໝ່ຳສະເໝີ ທີ່ເກີດຂຶ້ນໃນຮອບໄລຍະປີການບັນຊີ ຈະຖືກປະມານການ ແລະ ບັນທຶກເປັນລາຍຈ່າຍລໍຖ້າຕັດຈ່າຍໃນ ເອກະສານລາຍງານການເງິນສັງລວມກິດຈະການ ຂອງເກົ້າເດືອນຕົ້ນປີ ກໍຕໍ່ເມື່ອລາຍຈ່າຍດັ່ງກ່າວມີຄວາມເໝາະສົມທີ່ຈະປະມານການ ຫຼື ເໝາະສົມທີ່ຈະເລື່ອນການຮັບຮູ້ລາຍຈ່າຍດັ່ງກ່າວໄປບັນທຶກເມື່ອສິ້ນສຸດຮອບໄລຍະປີການບັນຊີ.

## 3. ການຄາດຄະເນ

ການສ້າງເອກະສານລາຍງານການເງິນສັງລວມກິດຈະການ ຂອງເກົ້າເດືອນຕົ້ນປີ ແມ່ນຜູ້ບໍລິຫານຈຳເປັນຕ້ອງມີການຕັດສິນໃຈ ການຄາດຄະເນ ແລະ ການສົມມຸດຕິຖານທີ່ມີຜົນກະທົບຕໍ່ວິທີການບັນຊີ ແລະ ການລາຍງານຕົວເລກຂອງຊັບສິນ ແລະ ໜີ້ສິນ, ລາຍຮັບ ແລະ ລາຍຈ່າຍ ເຊິ່ງໃນຄວາມເປັນຈິງອາດຈະມີຄວາມແຕກຕ່າງຈາກການຄາດຄະເນໄວ້.

ໃນການສ້າງເອກະສານລາຍງານການເງິນສັງລວມກິດຈະການ ຂອງເກົ້າເດືອນຕົ້ນປີ ຜູ້ບໍລິຫານມີການຕັດສິນໃຈໃນການນຳໃຊ້ຫຼັກການບັນຊີ ຂອງບໍລິສັດ ແລະ ແຫຼ່ງທີ່ມາອັນສຳຄັນໃນການຄາດຄະເນທີ່ບໍ່ແນ່ນອນເຊັ່ນດຽວກັນກັບທີ່ໃຊ້ສຳລັບການສ້າງເອກະສານລາຍງານການເງິນ ສຳລັບທ້າຍປີສິ້ນສຸດວັນທີ 31 ທັນວາ 2017.

## 4. ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

| | ທົບທວນຄືນ 30 ກັນຍາ 2018 ກີບ | ກວດສອບ 31 ທັນວາ 2017 ກີບ |
|---|---|---|
| ເງິນສົດໃນມື | 1,089,366,720 | 161,258,860 |
| ເງິນສົດໃນທະນາຄານ | 11,359,297,625 | 8,120,114,813 |
| | **12,448,664,345** | **8,281,373,673** |

## 5. ໜີ້ຕ້ອງຮັບທາງການຄ້າ-ສຸດທິ

| | ທົບທວນຄືນ 30 ກັນຍາ 2018 ກີບ | ກວດສອບ 31 ທັນວາ 2017 ກີບ |
|---|---|---|
| ໜີ້ຕ້ອງຮັບທາງການຄ້າ ຈາກພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 19,iii) | 42,419,158,297 | 43,502,729,774 |
| ໜີ້ຕ້ອງຮັບທາງການຄ້າ | 48,182,946,544 | 66,257,025,619 |
| | 90,602,104,841 | 109,759,755,393 |
| ຫັກ: ສຳຮອງບັນຊີໜີ້ສົງໄສຈະເສຍ | (6,121,393,459) | (5,355,565,589) |
| | **84,480,711,382** | **104,404,189,804** |

ໜີ້ຕ້ອງຮັບທາງການຄ້າ ຄ້າງຊຳລະໃນວັນທີ 30 ກັນຍາ 2018 ສາມາດວິເຄາະໄດ້ດັ່ງນີ້:

| | ທົບທວນຄືນ 30 ກັນຍາ 2018 ກີບ | ກວດສອບ 31 ທັນວາ 2017 ກີບ |
|---|---|---|
| ເຖິງ 5 ເດືອນ | 54,016,406,583 | 74,295,804,595 |
| 6 ເດືອນ ເຖິງ 1 ປີ | 2,469,890,305 | 1,654,779,095 |
| 1 - 2 ປີ | 2,468,248,802 | 6,068,649,842 |
| ເກີນ 2 ປີ | 31,647,559,151 | 27,740,521,861 |
| | 90,602,104,841 | 109,759,755,393 |
| ຫັກ: ສຳຮອງບັນຊີໜີ້ສົງໄສຈະເສຍ | (6,121,393,459) | (5,355,565,589) |
| | **84,480,711,382** | **104,404,189,804** |

## 6. ສິນຄ້າໃນສາງ-ສຸດທິ

| | ທົບທວນຄືນ 30 ກັນຍາ 2018 ກີບ | ກວດສອບ 31 ທັນວາ 2017 ກີບ |
|---|---|---|
| ນ້ຳມັນເຊື້ອໄຟ | 11,838,064,435 | 7,442,665,919 |
| ນ້ຳມັນເຄື່ອງ | 1,131,615,529 | 1,351,643,042 |
| ເຄື່ອງໃຊ້ຫ້ອງການ | 1,121,578,248 | 1,481,351,176 |
| ບັດເຕີມນ້ຳມັນ | 205,023,932 | - |
| | 14,296,282,144 | 10,275,660,137 |
| ຫັກ: ສຳຮອງຄ່າເຊື່ອມມູນຄ່າຕາມມູນຄ່າສຸດທິ | (22,445,023) | (179,245,277) |
| | **14,273,827,121** | **10,096,414,860** |

ໃນໄລຍະ 9 ເດືອນສິ້ນສຸດວັນທີ 30 ກັນຍາ 2018 ການສຳຮອງຄ່າເຊື່ອມມູນຄ່າຂອງສິນຄ້າໃນສາງ (ນ້ຳມັນເຄື່ອງ) ທີ່ສາງສະຫວັນນະເຂດ ຈຳນວນ 156,790,254 ກີບ ແມ່ນໄດ້ຖືກປັບປຸງເນື່ອງຈາກ ສິນຄ້າເຫຼົ່ານັ້ນໄດ້ຖືກຂາຍໃນລະຫວ່າງໄລຍະ.

## 7. ຊັບສິນໝຸນວຽນອື່ນໆ

| | ທົບທວນຄືນ 30 ກັນຍາ 2018 ກີບ | ກວດສອບ 31 ທັນວາ 2017 ກີບ |
|---|---|---|
| ໜີ້ຕ້ອງຮັບອື່ນໆຈາກພາກສ່ວນທີ່ກ່ຽວຂ້ອງ | 36,284,215,159 | 36,631,272,841 |
| ເງິນຈ່າຍລ່ວງໜ້າໃຫ້ຜູ້ສະໜອງ | 11,936472,465 | 12,483,871,506 |
| ເງິນຈ່າຍມັດຈຳໃຫ້ຜູ້ສະໜອງ | 6,114,354,374 | 7,163,417,449 |
| ເງິນຈ່າຍລ່ວງໜ້າໃຫ້ພະນັກງານ | 86,131,608 | 88,436,702 |
| ເງິນຈ່າຍລ່ວງໜ້າສຳລັບອາກອນກຳໄລ | 1,700,323,999 | 937,673,311 |
| ໜີ້ຕ້ອງຮັບອາກອນມູນຄ່າເພີ່ມ * | 487,496,526 | 500,770,213 |
| | **56,608,994,132** | **57,805,442,022** |

*ໜີ້ຕ້ອງຮັບອາກອນມູນຄ່າເພີ່ມຂອງບໍລິສັດ ຍ່ອຍ, ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ຈຳກັດ, ເຊິ່ງເກັບຈາກການຊື້ຜະລິດຕະພັນ ແລະ ບໍລິການ ຂອງ ກຸ່ມບໍລິສັດ.

## 8. ຊັບສິນບັດຄົງທີ່ມີຕົວຕົນ-ສຸດທິ

| | ກີບ |
|---|---|
| ຍອດຍົກມາໃນມູນຄ່າຕາມບັນຊີສຸດທິ ໃນວັນທີ 1 ມັງກອນ 2018 - ກວດສອບ | 269,317,540,947 |
| ໂອນຈາກຊັບສິນບັດຄົງທີ່ເພື່ອການລົງທຶນ | 181,327,034,778 |
| ເພີ່ມຂຶ້ນ* | 5,619,662,881 |
| ສະສາງ | - |
| ໂອນເຂົ້າ (ອອກ) | (2,537,415,280) |
| ຄ່າຫຼ້ຍຫ້ຽນ | (15,570,704,431) |
| ຍອດເຫຼືອໃນມູນຄ່າຕາມບັນຊີສຸດທິ ໃນວັນທີ 30 ກັນຍາ 2018 - ທົບທວນຄືນ | **438,156,118,895** |

*ໃນໄລຍະເກົ້າເດືອນ, ມີລາຍການຊັບສິນເພີ່ມຂຶ້ນຈຳນວນ 5,620 ລ້ານກີບ ເຊິ່ງປະກອບມີລາຍການເງິນສົດ ຈຳນວນ 2,491 ລ້ານກີບ ແລະ ບໍ່ແມ່ນລາຍການເງິນສົດຈຳນວນ 3,129 ລ້ານກີບ.

## 9. ຊັບສິນບັດຄົງທີ່ບໍ່ມີຕົວຕົນ-ສຸດທິ

| | ກີບ |
|---|---|
| ຍອດຍົກມາໃນມູນຄ່າຕາມບັນຊີສຸດທິ ໃນວັນທີ 1 ມັງກອນ 2018 - ກວດສອບ | 7,804,109,546 |
| ເພີ່ມຂຶ້ນ | - |
| ຄ່າເຊື່ອມມູນຄ່າ | (802,585,189) |
| ຍອດເຫຼືອໃນມູນຄ່າຕາມບັນຊີສຸດທິ ໃນວັນທີ 30 ກັນຍາ 2018 - ທົບທວນຄືນ | **7,001,524,357** |

## 10. ຊັບສິນບັດຄົງທີ່ເພື່ອການລົງທຶນ-ສຸດທິ

| | ກີບ |
|---|---|
| ຍອດຍົກມາໃນມູນຄ່າຕາມບັນຊີສຸດທິ ໃນວັນທີ 1 ມັງກອນ 2018 - ກວດສອບ | 180,903,625,951 |
| ໂອນເຂົ້າ (ອອກ) | 2,537,415,280 |
| ຄ່າຫຼ້ຍຫ້ຽນ | (2,114,006,453) |
| ໂອນໄປຊັບສິນບັດຄົງທີ່ມີຕົວຕົນ, ສຸດທິ* | (181,327,034,778) |
| ຍອດເຫຼືອໃນມູນຄ່າຕາມບັນຊີສຸດທິ ໃນວັນທີ 30 ກັນຍາ 2018 - ທົບທວນຄືນ | **-** |

* ການໂອນຈາກອະສັງຫາລິມະຊັບເພື່ອການລົງທຶນໄປເປັນອະສັງຫາລິມະຊັບທີ່ມີໄວ້ໃຊ້ງານໃຊ້ມູນຄ່າຕາມບັນຊີນະວັນທີ່ມີການປ່ຽນແປງການໃຊ້ງານ, ແຕ່ໃນການປະເມີນມູນຄ່າ ແມ່ນຍັງໃຊ້ລາຄາຕົ້ນທຶນເປັນເກນໃນການພິຈາລະນາຕາມນະໂຍບາຍບັນຊີຂອງຊັບສິນບັດຄົງທີ່ມີຕົວຕົນ.

## 11. ຊັບສິນບໍ່ໝຸນວຽນອື່ນໆ

| | ທົບທວນຄືນ 30 ກັນຍາ 2018 ກີບ | ກວດສອບ 31 ທັນວາ 2017 ກີບ |
|---|---|---|
| ຄ່າເຊົ່າລ່ວງໜ້າທີ່ດິນ* | 42,896,498,029 | 37,263,028,090 |
| ເງິນຈ່າຍລ່ວງໜ້າໃຫ້ປ້ຳນ້ຳມັນ | 6,577,238,000 | 6,682,075,860 |
| | **49,473,736,029** | **43,945,103,950** |

*ຄ່າເຊົ່າລ່ວງໜ້າທີ່ດິນນີ້ໝາຍເຖິງຍອດເຫຼືອເງິນຈ່າຍລ່ວງໜ້າຄ່າເຊົ່າທີ່ດິນຈາກພາກສ່ວນທີ່ກ່ຽວຂ້ອງຈຳນວນ 32,641,317,656 ກີບ (2017:11,238,174,346) (ບົດອະທິບາຍຂໍ້ 19, iii).

## 12. ໜີ້ຕ້ອງສົ່ງທາງການຄ້າ

| | ທົບທວນຄືນ 30 ກັນຍາ 2018 ກີບ | ກວດສອບ 31 ທັນວາ 2017 ກີບ |
|---|---|---|
| ໜີ້ຕ້ອງສົ່ງທາງການຄ້າ | 35,025,287,996 | 23,498,501,881 |
| ຕ້ອງສົ່ງທາງການຄ້າ – ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 19, iii) | 7,558,588,077 | 7,095,249,018 |
| | **42,583,876,073** | **30,593,750,899** |

## 13. ໜີ້ຕ້ອງສົ່ງອາກອນ

| | ທົບທວນຄືນ 30 ກັນຍາ 2018 ກີບ | ກວດສອບ 31 ທັນວາ 2017 ກີບ |
|---|---|---|
| ໜີ້ຕ້ອງສົ່ງອາກອນມູນຄ່າເພີ່ມ | 2,248,561,465 | 2,815,382,720 |
| ໜີ້ຕ້ອງສົ່ງອາກອນອື່ນໆ ແລະ ຕາມລະບຽບການ * | 131,426,293 | 234,783,128 |
| | **2,379,987,758** | **3,050,165,848** |

*ໜີ້ຕ້ອງສົ່ງອາກອນອື່ນໆ ແລະ ຕາມກົດໝາຍ ສ່ວນໃຫຍ່ປະກອບມີອາກອນຄ່າທາງ, ອາກອນຊົມໃຊ້, ອາກອນນຳເຂົ້າ, ກອງທຶນສຳຮອງລາຄານ້ຳມັນຕາມລະບຽບການ.

## 14. ເງິນກູ້ຢືມ

| | ທົບທວນຄືນ 30 ກັນຍາ 2018 ກີບ | ກວດສອບ 31 ທັນວາ 2017 ກີບ |
|---|---|---|
| **ໝຸນວຽນ** | | |
| ເງິນກູ້ຢືມຈາກສະຖາບັນການເງິນ | 288,512,846,316 | 274,031,960,000 |
| **ບໍ່ໝຸນວຽນ** | | |
| ເງິນກູ້ຢືມຈາກສະຖາບັນການເງິນ | 17,879,473,684 | 32,600,000,000 |
| | **306,392,320,000** | **306,631,960,000** |

ເງິນກູ້ຢືມໝຸນວຽນປະກອບດ້ວຍ ເງິນກູ້ຢືມຈາກພາກສ່ວນທີ່ກ່ຽວຂ້ອງ ຈຳນວນ 257,862,320,000 ກີບ (ບົດອະທິບາຍ 19, iv). ສຳລັບທ້າຍໄລຍະແມ່ນບໍ່ມີເງິນກູ້ເກີດຂຶ້ນ.

## 15. ໜີ້ສິນໝຸນວຽນອື່ນໆ

| | ທົບທວນຄືນ 30 ກັນຍາ 2018 ກີບ | ກວດສອບ 31 ທັນວາ 2017 ກີບ |
|---|---|---|
| ເງິນຮັບລ່ວງໜ້າຈາກລູກຄ້າ | 4,232,666,141 | 2,317,457,896 |
| ໜີ້ຕ້ອງສົ່ງອື່ນໆ | 6,049,660,917 | 5,148,466,748 |
| ໜີ້ຕ້ອງສົ່ງອື່ນໆ-ຈາກພວກສ່ວນທີ່ກ່ຽວຂ້ອງ | 18,364,320,000 | - |
| | **28,646,647,058** | **7,465,924,644** |

## 16. ທຶນຈົດທະບຽນ

ຮຸ້ນຂອງບໍລິສັດ (ພາຍໃຕ້ສັນຍາລັກ "PTL") ແມ່ນໄດ້ລົງທະບຽນໃນຕະຫຼາດຫຼັກຊັບລາວຢ່າງເປັນທາງການນັບຕັ້ງແຕ່ວັນທີ 10 ທັນວາ 2014 ຕາມໃບອະນຸຍາດສະບັບເລກທີ 005 ລົງວັນທີ 26 ພະຈິກ 2014. ຮຸ້ນທັງໝົດໃນວັນທີ 30 ກັນຍາ 2018 ມີຈຳນວນ 235,000,000 ຮຸ້ນ ເຊິ່ງມີມູນຄ່າຮຸ້ນລະ 2,000 ກີບ.

ໃນໄລຍະ 9 ເດືອນຕົ້ນປີສິ້ນສຸດວັນທີ 30 ກັນຍາ 2018 ແມ່ນບໍ່ໄດ້ມີການຫຼຸດ ຫຼື ອອກຮຸ້ນເພີ່ມ.

## 17. ອາກອນລາຍໄດ້

ລາຍຈ່າຍອາກອນລາຍໄດ້ລວມຢູ່ໃນເອກະສານລາຍງານການເງິນສັງລວມກິດຈະການ ທີ່ໄດ້ເປີດເຜີຍອາກອນລາຍໄດ້ຄົບໃນໄລຍະເກົ້າເດືອນທີ່ກ່ຽວຂ້ອງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສ່ວຍສາອາກອນລາວ, ອີງຕາມການອອກກົດໝາຍຂອງປະທານປະເທດກ່ຽວກັບອາກອນລາຍໄດ້ ແລະ ຄ່າທຳນຽມຂອງຕະຫຼາດຫຼັກຊັບ ແລະ ກົດໝາຍສ່ວຍສາອາກອນໄທ.

ອີງຕາມການອອກກົດໝາຍຂອງປະທານປະເທດກ່ຽວກັບອາກອນລາຍໄດ້ ແລະ ຄ່າທຳນຽມຂອງຕະຫຼາດຫຼັກຊັບ, ສິດທິພິເສດຂອງ ບໍລິສັດ ທີ່ຈົດທະບຽນໃນຕະຫຼາດຫຼັກຊັບມີດັ່ງກ່າວນີ້ ບໍລິສັດ ສາມາດຫຼຸດອັດຕາເສຍອາກອນໄດ້ 5% ໃນລະຫວ່າງ 4 ປີທຳອິດ ນັບຈາກມື້ຈົດທະບຽນໃນຕະຫຼາດຫຼັກຊັບ (ເລີ່ມແຕ່ປີ 2014 ເຖິງ ປີ 2017). ຫຼັງຈາກນັ້ນ ບໍລິສັດ ຈະຕ້ອງໄດ້ປະຕິບັດເສຍອາກອນລາຍໄດ້ຕາມອັດຕາອາກອນລາຍໄດ້ ອີງຕາມກົດໝາຍສ່ວຍສາອາກອນລາວ.

## 18. ກຳໄລ (ຂາດທຶນ) ພື້ນຖານຕໍ່ຮຸ້ນ

ກຳໄລ (ຂາດທຶນ) ພື້ນຖານຕໍ່ຮຸ້ນແມ່ນຄິດໄລ່ ໂດຍການຫານກຳໄລ (ຂາດທຶນ) ສຸດທິ ທີ່ເປັນຂອງຜູ້ຖືຮຸ້ນໂດຍຈຳນວນຮຸ້ນສາມັນສະເລ່ຍທີ່ອອກໃນລະຫວ່າງໄລຍະ.

| | 30 ກັນຍາ 2018 | 30 ກັນຍາ 2018 |
|---|---|---|
| ຂາດທຶນສຸດທິ ຂອງຮຸ້ນສາມັນ (ກີບ) | (54,297,480,256) | (58,339,556,678) |
| ຄ່າສະເລ່ຍຂອງຈຳນວນຮຸ້ນສາມັນ (ຮຸ້ນ) | 235,000,000 | 235,000,000 |
| ກຳໄລ (ຂາດທຶນ) ພື້ນຖານຕໍ່ຮຸ້ນ (ກີບ) | (231) | (248) |

## 19. ລາຍການເຄື່ອນໄຫວຂອງພາກສ່ວນທີ່ກ່ຽວຂ້ອງ

ວິສາຫະກິດ ແລະ ບຸກຄົນ ໂດຍກົງ, ຫຼື ທາງອ້ອມ ໂດຍຜ່ານ ໜຶ່ງ ຫຼື ຫຼາຍສື່ກາງ, ການຄວບຄຸມ ຫຼື ຄວບຄຸມໂດຍ ຫຼື ພາຍໃຕ້ການຄວບຄຸມດຽວກັນກັບບໍລິສັດ ລວມເຖິງບໍລິສັດ ທີ່ຖືຮຸ້ນ, ບໍລິສັດ ຍ່ອຍ ແລະ ພາກສ່ວນທີ່ກ່ຽວຂ້ອງຂອງບໍລິສັດ, ພາກສ່ວນທີ່ກ່ຽວຂ້ອງ ແມ່ນລວມມີ ກ) ວິສາຫະກິດຮຸ້ນສ່ວນ ແລະ ບຸກຄົນທີ່ເປັນເຈົ້າຂອງເອງ, ທາງກົງ ຫຼື ທາງອ້ອມ, ເຊິ່ງການລົງຄະແນນສຽງໃນບໍລິສັດແມ່ນມີອຳນາດຕໍ່ບໍລິສັດ ຢ່າງເປັນສາລະສຳຄັນຕໍ່ກິດຈະການ, ຂ) ຜູ້ບໍລິຫານຫຼັກ ລວມເຖິງຜູ້ອຳນວຍການ ແລະ ເຈົ້າໜ້າທີ່ຂອງບໍລິສັດ ແລະ ສະມາຊິກໃນຄອບຄົວໃກ້ຊິດ ແລະ ຄ) ບໍລິສັດທີ່ກ່ຽວຂ້ອງພາຍໃຕ້ ຂໍ້ ກ) ແລະ ຂ). ໃນການພິຈາລະນາ ສາຍສຳພັນພາກສ່ວນທີ່ກ່ຽວຂ້ອງລະຫວ່າງບຸກຄົນ ຫຼື ກິດຈະການ ທີ່ກ່ຽວຂ້ອງກັນແຕ່ລະລາຍການ ບໍລິສັດ ພິຈາລະນາເຖິງເນື້ອໃນຂອງສາຍສຳພັນຫຼາຍກວ່າຮູບແບບທາງກົດໝາຍ.

ລາຍການຕໍ່ໄປນີ້ແມ່ນລາຍການສາລະສຳຄັນທີ່ກ່ຽວກັບພາກສ່ວນທີ່ກ່ຽວຂ້ອງ.

**i) ຂາຍສິນຄ້າ ແລະ ບໍລິການ**

| | ທີ່ບທວນຄືນ 30 ກັນຍາ 2018 ກີບ | ທີ່ບທວນຄືນ 30 ກັນຍາ 2017 ກີບ |
|---|---|---|
| ພາກສ່ວນທີ່ກ່ຽວຂ້ອງອື່ນໆ | 207,157,139,858 | 234,069,780,487 |

## 19. ລາຍການເຄື່ອນໄຫວຂອງພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

### ii) ຊື້ສິນຄ້າ ແລະ ບໍລິການ

| | ທີ່ບທວນຄືນ 30 ກັນຍາ 2018 ກີບ | ທີ່ບທວນຄືນ 30 ກັນຍາ 2017 ກີບ |
|---|---|---|
| ຊື້ບໍລິການຈາກ: | | |
| ບໍລິສັດຍ່ອຍ | - | 6,795,691,980 |
| ພາກສ່ວນທີ່ກ່ຽວຂ້ອງອື່ນໆ | 11,860,772,122 | 4,718,225,101 |
| | 11,860,772,122 | 11,513,917,081 |

### iii) ຍອດຄ້າງຊຳລະທີ່ເກີດຂຶ້ນຈາກການຂາຍ / ຊື້ ສິນຄ້າ / ບໍລິການ

| | ທີ່ບທວນຄືນ 30 ກັນຍາ 2018 ກີບ | ກວດສອບ 31 ທັນວາ 2017 ກີບ |
|---|---|---|
| *ໜີ້ຕ້ອງຮັບຈາກ:* | | |
| ຜູ້ບໍລິຫານຫຼັກ (ບົດອະທິບາຍ 7) | 22,497,682,340 | 22,497,682,340 |
| ພາກສ່ວນທີ່ກ່ຽວຂ້ອງອື່ນໆ* | 78,703,373,456 | 70,065,957,430 |
| | **101,201,055,796** | **92,563,639,770** |
| *ໜີ້ຕ້ອງສົ່ງໃຫ້:* | | |
| ຜູ້ບໍລິຫານຫຼັກ | 18,364,320,000 | - |
| ພາກສ່ວນທີ່ກ່ຽວຂ້ອງອື່ນໆ (ບົດອະທິບາຍ 12) | 7,558,588,077 | 7,095,249,018 |
| | **25,922,908,077** | **7,095,249,018** |

*ໜີ້ຕ້ອງຮັບຈາກພາກສ່ວນທີ່ກ່ຽວຂ້ອງອື່ນໆສ່ວນໃຫຍ່ປະກອບດ້ວຍ ຍອດເຫຼືອເງິນຈ່າຍລ່ວງໜ້າຄ່າເຊົ່າທີ່ດິນຈາກພາກສ່ວນທີ່ກ່ຽວຂ້ອງຈຳນວນ 32,641,317,656 ກີບ(2017:11,238,174,346) (ບົດອະທິບາຍ 11), ໜີ້ຕ້ອງຮັບທາງການຄ້າຈາກພາກສ່ວນທີ່ກ່ຽວຂ້ອງຈຳນວນ 42,419,158,297 ກີບ (2017: 43,502,729,774 ກີບ) (ບົດອະທິບາຍ 5).

### iv) ເງິນກູ້ຍືມຈາກພາກສ່ວນທີ່ກ່ຽວຂ້ອງ

| | ທີ່ບທວນຄືນ 30 ກັນຍາ 2018 ກີບ | ກວດສອບ 31 ທັນວາ 2017 ກີບ |
|---|---|---|
| *ພາກສ່ວນທີ່ກ່ຽວຂ້ອງ:* | | |
| ທະນາຄານພົງສະຫວັນ | | |
| i) ເງິນກູ້ຍືມໄລຍະສັ້ນ (ບົດອະທິບາຍ 14) | 257,862,320,000 | 247,951,960,000 |
| ii) ເງິນກູ້ຍືມໄລຍະຍາວ | - | - |
| | **257,862,320,000** | **247,951,960,000** |

## 19. ລາຍການເຄື່ອນໄຫວຂອງພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

### v) ເງິນໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງກູ້ຢືມ

| | ທົບທວນຄືນ 30 ກັນຍາ 2018 ກີບ | ກວດສອບ 31 ທັນວາ 2017 ກີບ |
|---|---|---|
| ໃນວັນທີ 1 ມັງກອນ - ກວດສອບ | 40,809,343,271 | 38,099,943,271 |
| ເພີ່ມຂຶ້ນ | - | 2,709,400,000 |
| ສ່ວນຕ່າງຈາກການແປງຄ່າ | 246,680,000 | - |
| ໃນວັນທີ 30 ກັນຍາ - ທົບທວນຄືນ | **41,056,023,271** | **40,809,343,271** |

ເງິນໃຫ້ກູ້ຢືມແກ່ຜູ້ບໍລິຫານຫຼັກ ແລະ ພາກສ່ວນທີ່ກ່ຽວຂ້ອງອື່ນ ແມ່ນບໍ່ມີດອກເບ້ຍ ແຕ່ ຕ້ອງກຳນົດວັນທີຊຳລະຄືນ.

## 20. ພັນທະ ແລະ ພາລະຜູກພັນ

### ພາລະຜູກພັນສັນຍາເຊົ່າດຳເນີນງານ ທີ່ບໍລິສັດເປັນຜູ້ຊ່ຳ

ກຸ່ມບໍລິສັດເຊົ່າທີ່ດິນພາຍໃຕ້ສັນຍາເຊົ່າດຳເນີນງານທີ່ບໍ່ສາມາດຍົກເລີກໄດ້, ພາລະຜູກພັນຂັ້ນຕ່ຳໃນວັນທີໃບສະຫລຸບຊັບສິນປັດ ພາຍໃຕ້ສັນຍາເຊົ່າດຳເນີນງານດັ່ງຕໍ່ໄປນີ້:

| | ທົບທວນຄືນ 30 ກັນຍາ 2018 ກີບ | ກວດສອບ 31 ທັນວາ 2017 ກີບ |
|---|---|---|
| ຕ່ຳກວ່າ 1 ປີ | 9,846,480,000 | 9,698,040,000 |
| ຈາກ 1-5 ປີ | 5,271,758,420 | 5,170,324,420 |
| ຫຼາຍກວ່າ 5 ປີ | 21,981,059,708 | 21,598,107,708 |
| | **37,099,298,128** | **36,466,472,128** |

### ພາລະຜູກພັນສັນຍາເຊົ່າດຳເນີນງານ ທີ່ບໍລິສັດເປັນຜູ້ໃຫ້ເຊົ່າ

ກຸ່ມບໍລິສັດໃຫ້ເຊົ່າ ປ້ຳນ້ຳມັນ ແລະ ສຳນັກງານ ພາຍໃຕ້ສັນຍາເຊົ່າດຳເນີນງານ ໜີ້ຕ້ອງຮັບສັນຍາເຊົ່າຂັ້ນຕ່ຳໃນວັນທີ ໃບສະຫລຸບຊັບສິນປັດພາຍໃຕ້ສັນຍາເຊົ່າດຳເນີນງານດັ່ງຕໍ່ໄປນີ້:

| | ທົບທວນຄືນ 30 ກັນຍາ 2018 ກີບ | ກວດສອບ 31 ທັນວາ 2017 ກີບ |
|---|---|---|
| ຕ່ຳກວ່າ 1 ປີ | 1,968,000,000 | 1,968,000,000 |
| ຈາກ 1-5 ປີ | 9,840,000,000 | 9,840,000,000 |
| ຫຼາຍກວ່າ 5 ປີ | 699,000,000 | 699,000,000 |
| | **12,507,000,000** | **12,507,000,000** |

## 21. ເຫດການທີ່ເກີດຂຶ້ນຫຼັງວັນທີບົດລາຍງານ

ເລີ່ມຈາກ 16 ຕຸລາ 2018, ບໍລິສັດໃນເຄືອ ທັງສອງ ຄື ບໍລິສັດ ປີໂຕເທຣດ (ລາວ) ຈຳກັດ ແລະ ບໍລິສັດ ປີໂຕເທຣດ ຣີເທວ (ລາວ) ຈຳກັດ ໄດ້ປ່ຽນຊື່ໃໝ່ຢ່າງເປັນທາງການ ເປັນ ບໍລິສັດ ປີໂຕເທຣດ ພຸມາ ເອນເນີຈີ ອິມພອດ ແລະ ເອັກພອດ ຈຳກັດ ແລະ ບໍລິສັດ ປີໂຕ ເທຣດ ພຸມາ ເອນເນີຈີ ດິສທຣິບິວເຊິນ ຈຳກັດ ຕາມລຳດັບ.